**ມິຊຊາອາທິດທີ 15 ກຳນົດທຳມະດາ**

**ວັນທີ 10 ກໍລະກົດ 2022**



**ພຣະວໍລະສານໂດຍນັກບຸນລູກາ 10, 25-37**

ໃນເວລານັ້ນ, ມີນັກກົດໝາຍຜູ້ໜຶ່ງຢາກຈັບຜິດພຣະອົງໄດ້ລຸກຂຶ້ນທູນວ່າ: ພຣະອາຈານ, ຂ້າພະເຈົ້າຈະຕ້ອງທຳຢ່າງໃດຈຶ່ງຈະໄດ້ຊີວິດນິລັນດອນ? ພຣະເຢຊູເຈົ້າກ່າວຕອບວ່າ: ໃນພຣະຄຳພີໄດ້ຂຽນໄວ້ວ່າຢ່າງໃດ, ທ່ານໄດ້ອ່ານວ່າຢ່າງໃດ? ຜູ້ນັ້ນທູນຕອບວ່າ: ຈົ່ງຮັກພຣະອົງພຣະເຈົ້າຂອງເຈົ້າສຸດດວງໃຈ, ສຸດວິນຍານ, ສຸດກຳລັງແລະສຸດຈິດໃຈຂອງເຈົ້າ. ແລ້ວຈົ່ງຮັກເພື່ອນມະນຸດຄືຮັກຕົວເຈົ້າເອງ. ພຣະເຢຊູເຈົ້າກ່າວວ່າ: ທ່ານຕອບຖືກຕ້ອງດີແທ້. ຈົ່ງປະຕິບັດຕາມແລ້ວທ່ານຈະໄດ້ຊີວິດ.

ແຕ່ນັກກົດໝາຍນັ້ນຢາກສະແດງວ່າຕົນເປັນຄົນທ່ຽງທຳແລ້ວ, ຈຶ່ງທູນພຣະເຢຊູເຈົ້າວ່າ: ເພື່ອນມະນຸດຂອງຂ້າພະເຈົ້ານັ້ນແມ່ນຜູ້ໃດແທ້? ພຣະເຢຊູເຈົ້າຈຶ່ງກ່າວຕອບວ່າ: ມີຄົນຜູ້ໜຶ່ງລົງມາແຕ່ນະຄອນເຢລູຊາແລມເພື່ອໄປເມືອງເຢລີໂກ, ເລີຍຕົກໃນມືຂອງພວກນັກປຸ້ນ. ພວກນັ້ນກໍປຸ້ນເອົາຊັບ, ພາກັນທຸບຕີລາວຈົນເກືອບຕາຍແລ້ວກໍປະໜີໄປ. ເວລານັ້ນ, ມີພຣະສົງອົງໜຶ່ງກາຍມາທາງນັ້ນ, ແນມເຫັນແລ້ວກໍກາຍໄປເລີຍ. ສຳມະເນນທີ່ກາຍມາໃກ້ໆ, ແນມເຫັນແລ້ວກໍກາຍໄປເລີຍດັ່ງດຽວກັນ. ຕໍ່ມາ, ມີຊາວຊາມາຣີຜູ້ໜຶ່ງເດີນທາງມາ, ພໍພົບເຫັນກໍເກີດມີຄວາມສົງສານ, ຈຶ່ງເຂົ້າໄປຫາ, ເອົານ້ຳມັນແລະນ້ຳອະງຸ່ນມາລ້າງແລະຫໍ່ພັນບາດແຜໃຫ້, ແລ້ວໂຊມຂຶ້ນຫລັງລາພາໄປທີ່ໂຮງແຮມແຫ່ງໜຶ່ງແລະປິ່ນປົວຮັກສາເຂົາ.

ມື້ຕໍ່ມາ, ລາວໄດ້ເອົາເງິນສອງຫລຽນໃຫ້ເຈົ້າຂອງໂຮງແຮມພ້ອມກັບສັ່ງວ່າ: ຈົ່ງປິ່ນປົວຮັກສາຄົນນີ້ໃຫ້ດີ, ແລະຖ້າທ່ານໃຊ້ຈ່າຍຫລາຍກວ່າອີກ, ເມື່ອຫລັບມາຂ້າພະເຈົ້າຈະທົດແທນໃຫ້.

ໃນສາມຄົນນີ້, ທ່ານເຫັນວ່າຜູ້ໃດແມ່ນເພື່ອນມະນຸດຂອງຜູ້ທີ່ຖືກພວກນັກປຸ້ນທຳຮ້າຍ? ນັກກົດໝາຍທູນຕອບວ່າ: ແມ່ນຜູ້ທີ່ມີຄວາມສົງສານເຂົານັ້ນແລ້ວ. ພຣະເຢຊູເຈົ້າກ່າວວ່າ: ເຊີນໄປດີ, ແລະທຳແບບດຽວກັນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ບົດອ່ານທີໜຶ່ງແລະພຣະວໍລະສານວັນອາທິດນີ້ລ້ວນແຕ່ກ່າວເຖິງພຣະບັນທຳບັນຍັດ. ໃນບົດອ່ານທີໜຶ່ງ, ພຣະທຳບັນຍັດຊຶ່ງໂມແຊກ່າວກັບປະຊາກອນອິສຣາແອນນັ້ນເປັນພຣະທຳບັນຍັດທີ່ກ່ຽວກັບຊີວິດປະຈຳວັນຂອງພວກເຂົາ. ບໍ່ວ່າຈະເປັນຄຳປາກຄຳເວົ້າ, ຄວາມຄິດຄວາມປາດຖະໜາແລະການປະຕິບັດຕໍ່ຄົນອື່ນ. ສະຫລຸບແລ້ວແມ່ນພຣະທຳບັນຍັດກ່ຽວກັບຄວາມຮັກ. ເພາະພຣະເຈົ້າຜູ້ໄດ້ມອບພຣະທຳບັນຍັດນີ້ໃຫ້ໂມແຊເປັນອົງແຫ່ງຄວາມຮັກ. ດ້ວຍເຫດນີ້, ພຣະອົງຈຶ່ງປາດຖະໜາໃຫ້ປະຊາກອນຂອງພຣະອົງມີຄວາມຮັກຕໍ່ກັນແລະກັນແລະຕໍ່ພຣະອົງດ້ວຍ. ແລະເມື່ອພວກເຮົາມີຄວາມຮັກຕໍ່ກັນແລະກັນແລ້ວ, ພຣະເຈົ້າກໍຈະສະຖິດຢູ່ໃນຕົວພວກເຮົາ. ແລະຄົນອື່ນກໍຈະເຫັນພຣະເຈົ້າໄດ້ຜ່ານທາງຊີວິດຂອງພວກເຮົາ. ດັ່ງທີ່ພຣະເຢຊູເຈົ້າເປັນຮູບແບບຂອງພຣະບິດາ. ດ້ວຍເຫດນີ້, ຜູ້ໃດເຫັນພຣະເຢຊູເຈົ້າກໍແມ່ນເຫັນພຣະບິດາ, ດັ່ງທີ່ນັກບຸນເປົາໂລກ່າວໃນບົດອ່ານທີສອງຂອງວັນນີ້.

ສ່ວນໃນພຣະວໍລະສານວັນນີ້, ພຣະເຢຊູເຈົ້າກໍຕອບນັກກົດໝາຍທີ່ມາຖາມສົ່ພຣະອົງກ່ຽວກັບຊີວິດນິລັນດອນວ່າ: ຖ້າເຈົ້າຢາກມີສ່ວນໃນຊີວິດນິລັນດອນ ໃຫ້ເຈົ້າຮັກພຣະເຈົ້າແລະເພື່ອນພີ່ນ້ອງຂອງເຈົ້າ. ນັກກົດໝາຍນີ້ອາດຈະຮູ້ຈັກແລ້ວກ່ຽວກັບພຣະບັນຍັດທີ່ພຣະເຢຊູເຈົ້າກ່າວມານີ້, ແຕ່ເຂົາອາດຍັງບໍ່ໄດ້ປະຕິບັດຢ່າງຖືກຕ້ອງຕາມທີ່ພຣະເຢຊູເຈົ້າປາດຖະໜາ. ເພາະຄວາມຮັກທີ່ພຣະເຢຊູເຈົ້າກ່າວນີ້ບໍ່ໄດ້ຈຳກັດຢູ່ແຕ່ໃນຂອບເຂດໃດໜຶ່ງເທົ່ານັ້ນ, ແຕ່ແມ່ນຄວາມຮັກສຳລັບທຸກຄົນແມ່ນກະທັ້ງຜູ້ທີ່ເປັນສັດຕູຕໍ່ພວກເຮົາ. ດັ່ງຕົວຢ່າງທີ່ພຣະເຢຊູເຈົ້າກ່າວໃນພຣະວໍລະສານວັນນີ້ກ່ຽວກັບຄົນຊາມາຣີຜູ້ໃຈດີທີ່ຊ່ວຍຄົນຖືກໂຈນປຸ້ນແລະທຳຮ້າຍຢູ່ກາງທາງ. ເຖິງວ່າຄົນຊາມາຣີຈະບໍ່ເປັນມິດກັບຄົນຢິວ. ແລະເຖິງວ່າຄົນຊາມາຣີຈະບໍ່ຮູ້ຈັກຄົນຢິວທີ່ຖືກທຳຮ້າຍນີ້, ແຕ່ເຂົາກໍເຂົ້າໄປຊ່ວຍຮັກສາປິ່ນປົວແລະນຳຄົນຖືກທຳຮ້າຍນີ້ໄປພັກຟື້ນໃຫ້ດີຫາຍ. ຄວາມຮັກທີ່ຄົນຊາມາຣີສະແດງອອກນີ້ເປັນຄວາມຮັກທີ່ແທ້ຈິງ, ບໍ່ຄິດຄຳນວນແລະບໍ່ຫວັງສິ່ງຕອບແທນ. ແລະກໍແມ່ນຄວາມຮັກນີ້ແລທີ່ພຣະເຢຊູເຈົ້າປາດຖະໜາໃຫ້ພວກເຮົານຳມາປະຕິບັດຕໍ່ເພື່ອນພີ່ນ້ອງຂອງພວກເຮົາ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດປັ້ນດວງໃຈລູກໃຫ້ເປັນດວງໃຈທີ່ພຽບລົ້ນດ້ວຍຄວາມຮັກເມດຕາເໝືອນດັ່ງພຣະອົງ. ເພື່ອລູກຈະໄດ້ຮູ້ຈັກເສຍສະລະຕົວເອງແລະຄິດຫາຄົນອື່ນ. ເປັນຕົ້ນແມ່ນຄົນທີ່ຕ້ອງການຄວາມຊ່ວຍເຫລືອຈາກລູກນັ້ນເອງ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ